ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເລກທີ 1596 /ກທຄວ.ອຄ

ນະຄອນຫຼວງວຽງຈັນ, ວັນທີ 15 ພະຈິກ 2018

ເຖິງ: - ເຈົ້າໜ້າທີ່ທະບຽນວິສາຫະກິດ, ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ

- ເຈົ້າໜ້າທີ່ທະບຽນວິສາຫະກິດ, ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ

**ເລື່ອງ:** ລົບລ້າງການນຳໃຊ້ແບບຟອມໃບຢັ້ງຢືນທີ່ຕັ້ງສຳນັກງານ ຫລື ສາຂາຂອງວິສາຫະກິດ ແລະ ການແຈ້ງຂຶ້ນທະບຽນວິສາຫະກິດ ໃນກິດຈະການບໍລິການ ຂອງຂະແໜງການທະນາຄານ

- ອີງຕາມ ເນື້ອໃນ ຈິດໃຈຂອງຄຳສັ່ງ, ສະບັບເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018; ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ;
- ອີງຕາມ ໜັງສືຂອງຫ້ອງການທະນາຄານ, ສະບັບເລກທີ 793/ຫທ, ລົງວັນທີ 5 ພະຈິກ 2018.

ເພື່ອລຸດຜ່ອນ ຈຳນວນເອກະສານທີ່ບໍ່ຈຳເປັນ ໃນສຳນວນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ແລະ ເພື່ອປ້ອງກັນຊ່ອງຫວ່າງ ທີ່ອາດເກີດຈາກຄວາມສັບສົນໃນການນຳໃຊ້ຄຳສັບ ຫລື ຊື່ກິດຈະການ ທີ່ຕິດພັນກັບການໃຫ້ບໍລິການໃນຂະແໜງການທະນາຄານ, ກົມທະບຽນ ແລະຄຸ້ມຄອງວິສາຫະກິດ (ກະຊວງອຸດສາຫະກຳ ແລະ ການຄ້າ) , ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ລົບລ້າງ ການນຳໃຊ້ຮ່າງແບບຟອມໃບຢັ້ງຢືນທີ່ຕັ້ງສຳນັກງານ ຫລື ສາຂາຂອງວິສາຫະກິດ ອອກຈາກຂັ້ນຕອນການແຈ້ງຂຶ້ນທະບຽນວິສາຫະກິດ. ຫ້າມຮຽກຮ້ອງເອກະສານດັ່ງກ່າວ ຈາກຜູ້ລົງທຶນອີກ.

ໃຫ້ເພີ່ມທະວີວຽກງານຄຸ້ມຄອງ ຕິດຕາມ ກວດກາກ່ຽວກັບທີ່ຕັ້ງສຳນັກງານ ພາຍຫລັງໄດ້ຂຶ້ນທະບຽນວິສາຫະກິດ ໃຫ້ແກ່ຜູ້ລົງທຶນແລ້ວ;

2. ທຸກກິດຈະການ ທີ່ບົ່ງໄວ້ໃນບັນຊີ (ຄັດຕິດມາພ້ອມນີ້) ລວມທັງກິດຈະການທີ່ມີລັກສະນະຄຸນເຄືອຄ້າຍຄື ຫລື ສົງໃສວ່າ ອາດເປັນກິດຈະການທີ່ຕິດພັນກັບການໃຫ້ບໍລິການໃນຂະແໜງການທະນາຄານ ແມ່ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງພະແນກ ຫລື ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນທ້ອງຖິ່ນ ແນະນຳຜູ້ລົງທຶນໃຫ້ມາຍື່ນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ນຳກົມທະບຽນ ແລະຄຸ້ມຄອງວິສາຫະກິດ ເພື່ອປະສານກັບພາກສ່ວນທີ່ກ່ຽວຂ້ອງ ຂອງທະນາຄານ ແຫ່ງ ສປປ ລາວ ໃນການພິຈາລະນາອະນຸຍາດ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ຫົວໜ້າກົມ

ດຣ.ສົມພອງ ພຽນພົມດ

Scanned by CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 793 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 05 ພະຈິກ 2018

ຮຽນ: ທ່ານ ຫົວໜ້າຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ທີ່ນັບຖື.

ເລື່ອງ: ນຳສົ່ງລາຍການບັນດາຄຳສັບ ຫຼື ຊື່ເອີ້ນກ່ຽວກັບການອອກທະບຽນວິສາຫະກິດ ທີ່ຕິດພັນກັບການໃຫ້ບໍລິການໃນຂະແໜງການທະນາຄານ.

- ອີງຕາມການພົບປະປຶກສາຫາລືຮ່ວມກັບກົມທະບຽນແລະຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ, ລົງວັນທີ 27 ກັນຍາ 2018;
- ອີງຕາມການຄົ້ນຄວ້າ ແລະ ເຫັນດີເປັນເອກະພາບພາຍໃນ ທະນາຄານແຫ່ງ ສປປ ລາວ.

ຫ້ອງການ ທະນາຄານແຫ່ງ ສປປ ລາວ ຂໍຮຽນລາຍງານມາຍັງທ່ານຊາບວ່າ: ພາຍຫຼັງທີ່ໄດ້ມີການພົບປະກັນລະຫວ່າງ ທ່ານ ສຸລິສັກ ທຳນຸວົງ ວ່າການຫົວໜ້າກົມຄຸ້ມຄອງລະບົບຊຳລະສະສາງ, ທະນາຄານແຫ່ງ ສປປ ລາວ ແລະ ທ່ານ ປອ ສົມພອງ ພຣົມພິນິດ ຫົວໜ້າກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ໃນວັນທີ 27 ກັນຍາ 2018, ຢູ່ທີ່ ກະຊວງອຸດສາຫະກຳ ແລະ ການຄ້າ. ຈຸດປະສົງແມ່ນເພື່ອປຶກສາຫາລືກ່ຽວກັບການອອກທະບຽນຊື່ທຸລະກິດ ທີ່ກ່ຽວຂ້ອງກັບຂະແໜງການທະນາຄານ ເປັນຕົ້ນແມ່ນການແລກປ່ຽນ ຫຼື ຊື້-ຂາຍຊັບສິນດີຈິຕອລ (Digital Asset Trading/Exchange), ເງິນດີຈິຕອລ (Digital Currency) ໂດຍສະເພາະແມ່ນເງິນຄຣິບໂຕ (Cryptocurrency), ການແລກປ່ຽນ ຫຼື ຊື້-ຂາຍເງິນຕາຕ່າງປະເທດຜ່ານບັນຊີ (Foreign Currency Exchange), ບໍລິສັດອອກແບບ ແລະ ພັດທະນາເຕັກໂນໂລຊີທາງການເງິນ (Fintech). ບໍລິສັດທີ່ເປີດດ້ວຍຊື່ທີ່ຄ້າຍຄືກິດຈະການເຫຼົ່ານີ້ ທີ່ໄດ້ຂຶ້ນທະບຽນແລ້ວຈຳນວນໜຶ່ງ ແຕ່ຍັງບໍ່ໄດ້ຮັບອະນຸຍາດຈາກ ທຫລ ໄດ້ມີການໂຄສະນາທາງສື່ວິທະຍຸ, ສັງຄົມອອນໄລນ໌ ແລະ ອື່ນໆ ວ່າ ບັນດາວິສາຫະກິດດັ່ງກ່າວ ໄດ້ຮັບການອະນຸຍາດໃຫ້ດຳເນີນທຸລະກິດຈາກຂະແໜງການກ່ຽວຂ້ອງ ກໍ່ຄືທະນາຄານແຫ່ງ ສປປ ລາວ ແລ້ວ ເປັນຕົ້ນແມ່ນ: ບໍລິສັດ WONE INTERNATIONAL LIMITED, ບໍລິສັດລາວດີຈິຕອລແອັສເຊັດ ເອັກເຊນ ຈຳກັດ (Lao Digital Asset Exchange Co.,Ltd) ແລະ ອື່ນໆ ເຊິ່ງສ້າງຄວາມສັບສົນໃຫ້ແກ່ມວນຊົນ. ຜ່ານການຄົ້ນຄວ້າ ທຫລ ມີຂໍ້ສະເໜີຕໍ່ວຽກງານດັ່ງກ່າວ ດັ່ງນີ້:

1.) ສະເໜີໃຫ້ ພາກສ່ວນທີ່ກ່ຽວຂ້ອງກັບການອະນຸຍາດອອກທະບຽນວິສາຫະກິດ ຂັ້ນເມືອງ, ແຂວງ, ນະຄອນຫຼວງ, ແລະ ກົມທະບຽນ, ກະຊວງອຸດສາຫະກຳ ແລະ ການຄ້າ ປະສານເຖິງ ທຫລ ກ່ອນການອອກທະບຽນວິສາຫະກິດ ທີ່ມີຊື່ ຫຼື ການດຳເນີນທຸລະກິດທີ່ຄື ຫຼື ຄ້າຍຄື ບັນດາຄຳສັບທີ່ເປັນພາສາລາວ ຫຼື ພາສາອັງກິດ ດັ່ງລຸ່ມນີ້:

Scanned by CamScanner

- ການແລກປ່ຽນ ຫຼື ຊື້-ຂາຍຊັບສິນດິຈິຕອລ (Digital Asset Trading/Exchange);
- ເງິນດິຈິຕອລ (Digital Currency, Digital Money, Digital Cash, Virtual Currency);
- ເງິນຄຣິບໂຕ (Cryptocurrency): ເຊັ່ນ Bitcoin, Lifecoin, Etheruem, ESR Coin ແລະ ອື່ນໆ;
- ການຂຸດ Bitcoin (Mining), ການຂຸດ Bitcoin ຮ່ວມກັນ (Pools), ການຂຸດ Bitcoin ຜ່ານລະບົບCloud Mining;
- ກະເປົາເງິນ Bitcoin (Bitcoin-Wallets), ກະເປົາເງິນເອເລັກໂຕຣນິກ (E-Wallets) ຫຼື ກະເປົາເງິນໃນໂທລະສັບມືຖື;
- ການແລກປ່ຽນ ຫຼື ຊື້-ຂາຍເງິນຕາຕ່າງປະເທດຜ່ານບັນຊີ (Foreign Currency Trading/Exchange)
- ການແລກປ່ຽນຊື້-ຂາຍ ຕ່າງໆ (Future, Commodity,…. Trading/Exchange)
- ການແລກປ່ຽນ ຫຼື ຊື້-ຂາຍຄຳຜ່ານບັນຊີ (Gold Trading/Exchange );
- ການຄ້າທາງເອເລັກໂຕຣນິກ (E-Commerce);
- ການຮັບໂອນ ຫຼື ຊຳລະເງິນຂ້າມແດນ (Fund Transfer, Cross-Border Payment)
- ອື່ນໆ.

2) ສະເໜີໃຫ້ ພາກສ່ວນທີ່ກ່ຽວຂ້ອງກັບການອະນຸຍາດອອກທະບຽນວິສາຫະກິດຂັ້ນເມືອງ, ແຂວງ ນະຄອນຫຼວງ ແລະ ກົມທະບຽນ, ກະຊວງອຸດສາຫະກຳ ແລະ ການຄ້າ ສັງລວມລາຍຊື່ວິສາຫະກິດທີ່ມີຊື່ ຫຼື ການດຳເນີນທຸລະກິດທີ່ຄື ຫຼື ຄ້າຍຄື ບັນດາຄຳສັບທີ່ເປັນພາສາລາວ ຫຼື ພາສາອັງກິດ ດັ່ງທີ່ກ່າວມາຂ້າງເທິງນັ້ນໃຫ້ແກ່ ທຫລ ເພື່ອເປັນບ່ອນອີງໃນການຕິດຕາມກວດກາຕາມພາລະບົບບາດຂອງ ທຫລ ແລະ ເພື່ອເປັນການປ້ອງກັນປະກົດການທີ່ອາດສົ່ງຜົນກະທົບດ້ານລົບ ຫຼື ສົ່ງຜົນກະທົບຕໍ່ຄວາມໝັ້ນຄົງຂອງຂະແໜງການເງິນ-ການທະນາຄານ ຂອງ ສປປ ລາວ;

3) ສະເໜີສ້າງຈຸດປະສານງານລະຫວ່າງກັນຄື: ທະນາຄານແຫ່ງ ສປປ ລາວ ແມ່ນຕາງໜ້າໂດຍ ກົມຄຸ້ມຄອງລະບົບຊຳລະສະສາງ, ພະແນກກວດກາລະບົບຊຳລະ ແລະ ພະແນກນະໂຍບາຍລະບົບຊຳລະ.

- ພະແນກກວດກາລະບົບຊຳລະ, ໂທ: 021 253596
- ພະແນກນະໂຍບາຍລະບົບຊຳລະ, ໂທ: 021 253595

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາຕາມທາງຄວນດ້ວຍ.

ຮ. ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ສຸກັນ ຈັນທະວົງ

ຮຽນນຳສົ່ງ: ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

Scanned by CamScanner